ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--===000===--

ກະຊວງກະສິກຳ ແລະ ປ່າໄມ້

ກົມປ່າໄມ້

ເລກທີ 1546/ປມ.05

ນະຄອນຫຼວງວຽງຈັນ, ວັນທີ 8 SEP. 2005

**ເຖິງ** : ທ່ານຫົວໜ້າ ຂະແໜງປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

**ເລື້ອງ** : ການສົ່ງຕົ້ນດອກຈຳປາ ອອກຕ່າງປະເທດ.

- ອີງຕາມໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 537/ຫສນຍ.ກລຂ, ລົງວັນທີ 21/07/2005.
- ອີງຕາມການສ່ອງແສງລາຍງານ ຂອງຂະແໜງການສາຍຕັ້ງ ທີ່ປະຈຳການຢູ່ທ້ອງຖິ່ນ.

ກົມປ່າໄມ້ ຖືເປັນກຽດແຈ້ງມາໃຫ້ຊາບວ່າ : ຕົ້ນດອກຈຳປາ ແມ່ນຕົ້ນໄມ້ປະດັບປະຈຳຊາດ ຊະນິດໜຶ່ງ ທີ່ຕິດພັນກັບ ວັດທະນະທຳ ແລະ ຮີດຄອງປະເພນີ ຂອງປະຊາຊົນລາວມາແຕ່ສະໃໝ ດຶກດຳບັນ. ຕົ້ນດອກຈຳປາມີຫຼາຍຊະນິດ, ເປັນຕົ້ນໄມ້ທີ່ມີລຳຕົ້ນບໍ່ໃຫຍ່ ແລະ ຄົດ ແຕ່ມີດອກ ແລະ ໃບ ທີ່ສວຍສົດງົດງາມ. ປະຊາຊົນລາວ ໂດຍທົ່ວໄປແລ້ວ ແມ່ນນິຍົມປູກຕົ້ນດອກຈຳປານີ້ ສະເພາະ ແຕ່ໃນເຂດວັດວາອາຮາມ, ເຂດສັກກາລະບູຊາ ແລະ ເຂດສາທາລະນະອື່ນໆ. ພ້ອມນີ້ຍັງນິຍົມ ນຳໃຊ້ດອກຈຳປານີ້ ຢ່າງກວ້າງຂວາງ ເພື່ອຕົບແຕ່ງ ໃນພິທີທາງສາດສະໜາ ແລະ ງານປະເພນີ ຕ່າງໆ ເປັນຕົ້ນແມ່ນການຕົບແຕ່ງຂັນດອກໄມ້, ພາຂວານ ແລະ ການເອ້ຍ້ອງອື່ນໆ. ນອກຈາກນີ້ ປະຊາ ຊົນລາວ ໃນບາງທ້ອງຖິ່ນ ໄດ້ນຳໃຊ້ໃບອ່ອນຂອງຕົ້ນດອກຈຳປາ ເປັນອາຫານ ຄືກັບພືດຜັກ ຊະນິດ ອື່ນໆ. ສ່ວນຢູ່ປະເທດໃກ້ຄຽງ ກໍ່ໄດ້ເລີ່ມມີຄວາມນິຍົມຊົມຊອບ ກັບຕົ້ນດອກຈຳປານີ້ ນັບມື້ນັບເພີ້ມຂຶ້ນ ໃນການນຳໃຊ້ເປັນຕົ້ນໄມ້ປະດັບ ຕາມສະຖານທີ່ ສາທາລະນະຕ່າງໆ ແລະ ພ້ອມນີ້ຍັງ ມີກຸ່ມຄົນ ຈຳນວນໜຶ່ງ ນິຍົມນຳໃຊ້ດອກຈຳປາ ເພື່ອປຸງແຕ່ງເປັນອາຫານ. ຍ້ອນມີຄວາມນິຍົມຊົມຊອບ ໃນການ ນຳໃຊ້ຕົ້ນ

ດອກຈຳປາ ຢ່າງກວ້າງຂວາງ ບໍ່ວ່າຢູ່ພາຍໃນ ແລະ ຕ່າງປະເທດ ຈຶ່ງເປັນເຫດ ເຮັດໃຫ້ ຕົ້ນດອກຈຳປາ ທີ່ມີຢູ່ໃນປະເທດເຮົາໃນປະຈຸບັນນີ້ ມີທ່າອ່ຽງ ຫລຸດໜ້ອຍຖອຍລົງ ແລະ ຖ້າຈະອະນຸຍາດໃຫ້ສືບຕໍ່ສົ່ງອອກຕ່າງປະເທດຕໍ່ໄປ ຕົ້ນໄມ້ປະດັບຊະນິດນີ້ກໍ່ຈະສູນພັນໄປໃນທີ່ສຸດ.

ສະນັ້ນ, ເພື່ອເປັນການຄຸ້ມຄອງ ແລະ ປົກປັກຮັກສາຕົ້ນດອກຈຳປາ ທີ່ມີຢູ່ໃນປະຈຸບັນໃຫ້ ຍືນຍົງຄົງຕົວ ຕະຫຼອດໄປ ກົມປ່າໄມ້ ອອກແຈ້ງການດັ່ງນີ້ :

1. ຢຸດຕິ ຢ່າງເປັນເອກກະພາບ ແລະ ຂາດຕົວ ໃນການສົ່ງຕົ້ນດອກຈຳປາ ອອກຕ່າງປະເທດ ບໍ່ວ່າການສົ່ງອອກ ຈະເປັນຕົ້ນ, ເປັນເຫງົ້າ ຫຼື ເປັນສິ້ນສ່ວນຂອງລຳຕົ້ນ.
2. ໃຫ້ເອົາໃຈໃສ່ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມກວດກາ, ສະກັດກັ້ນ ແລະ ປະຕິບັດມາດຕະການ ຕາມລະບຽບກົດໝາຍ ຕໍ່ຜູ້ທີ່ລະເມີດ ໃນການສົ່ງຕົ້ນດອກຈຳປາ ອອກຕ່າງປະເທດ.
3. ເພື່ອຕອບສະໜອງ ໃຫ້ແກ່ຄວາມຕ້ອງການ ແລະ ຄວາມນິຍົມຊົມຊອບ ໃນການນຳໃຊ້ຕົ້ນດອກຈຳປາ ຂອງພາຍໃນ ແລະ ຕ່າງປະເທດ, ໃຫ້ຂະແໜງປ່າໄມ້ ສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ໃນການເຜີຍແຜ່ ແລະ ແນະນຳ ທາງດ້ານເຕັກນິກ ວິຊາການ ໃນການຂະຫຍາຍພັນຕົ້ນດອກຈຳປາ, ການປູກ ແລະ ບົວລະບັດຮັກສາ ເພື່ອເປັນສິນຄ້າ ແລະ ປຸກລະດົມ ຂະບວນການປູກ ຕົ້ນດອກຈຳປາ ຕາມສະຖານທີ່ສາທາລະນະຕ່າງໆ ໃຫ້ຫຼາຍຂຶ້ນ ແນໃສ່ປົກປັກຮັກສາ ຕົ້ນດອກຈຳປາ ໃຫ້ຄົງຢູ່ຄູ່ຄົນລາວ ຕະຫຼອດໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

ຫົວໜ້າກົມປ່າໄມ້

ກະຊວງກະສິກຳ ... ກົມປ່າໄມ້

ອິນປັນ ສູນທະນູສິນ

<u>ບ່ອນສົ່ງ</u>

- ຫ້ອງການ ກະສິກຳ ແລະ ປ່າໄມ້ ( ເພື່ອຊາບ ) 1 ສະບັບ.
- ພະແນກກະສິກຳແລະປ່າໄມ້ແຂວງ ນະຄອນຫຼວງ ແລະ ເຂດພິເສດ ບ່ອນລະ (ເພື່ອຊາບແລະຊ່ວຍຊີ້ນຳ) 1 ສະບັບ.
- ພະແນກ ວິຊາການ ກົມປ່າໄມ້ ( ເພື່ອຕິດຕາມ) 1 ສະບັບ.
- ເກັບມ້ຽນ 1 ສະບັບ.